# ການລົງທຶນຂອງອົດສະຕຣາລີໃນການພັດທະນາຄູ ຢູ່ ສປປ ລາວ

## ຈຸດເດັ່ນໃນການສະໜັບສະໜູນຄູ

ລັດຖະບານອົດສະຕຣາລີ ສະໜັບສະໜູນລັດຖະບານ ສປປ ລາວ ໃນການດຳເນີນການປະຕິຮູບການສຶກສາຊັ້ນປະຖົມ ໂດຍຜ່ານ ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ), ລວມທັງການນຳໃຊ້ຫຼັກສູດປະຖົມສະບັບປັບປຸງໃໝ່.

ໄລຍະທີ 1 ຂອງແຜນງານບີຄວາ (2015-22) ໄດ້ສະໜັບສະໜູນ ກະຊວງສຶກສາທິການ ແລະ ກິລາ (ສສກ) ໃນການຜັນຂະຫຍາຍຫຼັກສູດປະຖົມສະບັບປັບປຸງໃໝ່ໃນໂຮງຮຽນ. ການຊ່ວຍເຫຼືອຂອງແຜນງານບີຄວາລວມມີ ສື່ການຮຽນການສອນ, ການປະຖົມນິເທດກ່ຽວກັບຫຼັກສູດໃໝ່, ແລະ ທຶນສະໜັບສະໜູນວຽກງານສຶກສາ. ໄລຍະທີ 2 (2022-26) ແມ່ນໄດ້ສຸມໃສ່ການສອນແບບຮຽນຮ່ວມ, ການມີສ່ວນຮ່ວມຂອງນັກຮຽນ ແລະ ການປັບປຸງຜົນການຮຽນ.

ເພື່ອໃຫ້ເຂົ້າໃຈເຖິງຄວາມຄືບໜ້າ ແລະ ການປັບປຸງທີ່ຈຳເປັນ, ລັດຖະບານອົດສະຕຣາລີ ໄດ້ຈັດຕັ້ງການປະເມີນທີ່ເປັນເອກະລາດ. ໂດຍການນຳພາຂອງສະພາການຄົ້ນຄວ້າການສຶກສາຂອງອົດສະຕຣາລີ, ການສຶກສາຄົ້ນຄວ້າໄລຍະຍາວ ໄດ້ສຶກສາຄົ້ນຄວ້າເຖິງວິທີການທີ່ ແຜນງານບີຄວາໄດ້ສະໜັບສະໜູນການປັບປຸງຄຸນນະພາບການສອນ ແລະ ການຮຽນຮູ້ຂອງນັກຮຽນ. ໃນເອກະສານນີ້, ພວກເຮົາຈະເບິ່ງລົງເລິກຜົນຈາກການສຶກສາຄົ້ນຄວ້າ ກ່ຽວກັບການສະໜັບສະໜູນຄູສອນ.

### ການຄົ້ນພົບທີ່ສຳຄັນ

ການສຶກສາຄົ້ນຄວ້າໄລຍະຍາວໄດ້ຄົ້ນພົບວ່າ, ໂດຍລວມແລ້ວ ແຜນງານບີຄວາໄດ້ປະກອບສ່ວນເຂົ້າໃນການເສີມສ້າງອົງປະກອບຕ່າງໆຂອງຄຸນນະພາບຂອງການສອນ. ການປະຖົມນິເທດ ທີ່ໄດ້ຮັບການສະໜັບສະໜູນຈາກແຜນງານບີຄວາ, ພ້ອມທັງການນຳໃຊ້ສື່ການຮຽນການສອນຂອງຫຼັກສູດໃໝ່, ໄດ້ເສີມຂະຫຍາຍຄວາມຮູ້ ແລະ ຄວາມໝັ້ນໃຈຂອງຄູສອນຊັ້ນ ປ.1 ໃນການສອນພາສາລາວ. ນອກຈາກນີ້, ຄູສອນຊັ້ນ ປ.1 ຍັງໄດ້ພັດທະນາຍຸດທະສາດການຮຽນການສອນຂອງເຂົາເຈົ້ານຳອີກ.

**"ການປ່ຽນແປງທີ່ໃຫຍ່ທີ່ສຸດ ... ແມ່ນວິທີການສອນ ແລະ ການປ່ຽນຈາກການຮຽນແບບທ່ອງຈຳ ໄປສູ່ ການຮຽນຮູ້ທີ່ເນັ້ນໃສ່ການປະຕິບັດຕົວຈິງ, ເພື່ອໃຫ້ນັກຮຽນມີໂອກາດທີ່ຈະໄດ້ຮຽນຮູ້ຫຼາຍຂຶ້ນ ແລະ ມີປະສິດທິພາບດີຂຶ້ນ."**
**- ຜູ້ໃຫ້ສຳພາດຢູ່ຂັ້ນສູນກາງ**

ຂໍ້ມູນເຊິງເລິກຈາກການປະເມີນຜົນກ່ຽວກັບຄຸນນະພາບການສອນ ໄດ້ຜ່ານການເກັບກຳຂໍ້ມູນ 3 ຮອບ ໂດຍຜ່ານການເຮັດແບບສອບຖາມ, ການສຳພາດຜູ້ທີ່ເປັນກຳລະນີສຶກສາ ແລະ ການສັງເກດການສອນໃນຫ້ອງຮຽນວິຊາພາສາລາວ ແຕ່ປີ 2019-2022.

ຄູສອນ ແລະ ຜູ້ອຳນວຍການເຫັນຄຸນຄ່າຂອງການຝຶກອົບຮົມ ເນື່ອງຈາກວ່າມັນເປັນການປະຖົມນິເທດເນື້ອໃນຫຼັກສູດປະຖົມສະບັບປັບປຸງໃໝ່ ແລະ ຍຸດທະສາດການສອນ. ນອກນີ້, ຍັງໄດ້ມີການເຂົ້າຮ່ວມການປະຖົມນິເທດຈຳນວນຫຼວງຫຼາຍ, ແລະ ຜູ້ເຂົ້າຮ່ວມໃນການສຶກສາໄດ້ສະເໜີວ່າ ພວກເຂົາຕ້ອງການໂອກາດໃນການພັດທະນາວິຊາຊີບຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິ.


© ໃສ່ຮູບພາບ

ການປ່ຽນແປງໃນທາງບວກຂອງຄຸນນະພາບການສອນໄດ້ຊີ້ໃຫ້ເຫັນວ່າ ຫຼັກສູດປະຖົມສະບັບປັບປຸງໃໝ່ສ້າງການປ່ຽນແປງທີ່ດີຂຶ້ນໃນຫ້ອງຮຽນ. ມັນເປັນສິ່ງທີ່ສຳຄັນຫຼາຍສຳລັບຄູ ທີ່ຈະໄດ້ຮັບການສະໜັບສະໜູນດ້ານການພັດທະນາວິຊາຊີບຢ່າງຕໍ່ເນື່ອງ ເພື່ອເສີມສ້າງຂີດຄວາມສາມາດ ແລະ ຄວາມຮູ້ຂອງເຂົາເຈົ້າຕື່ມອີກ.

ສື່ການຮຽນການສອນຫຼັກສູດໃໝ່ ໄດ້ໃຫ້ການສະໜັບສະໜູນແກ່ຄູສອນຢ່າງຫຼວງຫຼາຍ.

- ຄູ່ມືຄູ ແມ່ນເຫັນວ່າເປັນປະໂຫຍດຫຼາຍ ເນື່ອງຈາກວ່າມັນເປັນຄຳແນະນຳທີ່ຊັດເຈນກ່ຽວກັບເຕັກນິກ, ກິດຈະກຳ, ສື່ການຮຽນການສອນ ແລະ ເວລາ.

**"ຂ້ອຍຮູ້ສຶກວ່າ ຂ້ອຍມີຄວາມໝັ້ນໃຈໃນການສິດສອນຫຼາຍຂຶ້ນ ເພາະຂ້ອຍໄດ້ຮຽນຮູ້ຈາກຫຼາຍແຫຼ່ງເຊັ່ນ: ຄູ່ມືຄູ ເຊິ່ງມັນບໍ່ໄດ້ເປັນພຽງແຕ່ແຫຼ່ງການຮຽນຮູ້ຂອງຂ້ອຍເທົ່ານັ້ນ, ແຕ່ມັນຍັງເປັນແຫຼ່ງອ້າງອີງຂອງຂ້ອຍນຳອີກ."**
**- ຄູສອນ, ໃນແຂວງພາກໃຕ້.**

ຄູຕີລາຄາສູງໂອກາດໃນການພັດທະນາວິຊາຊີບ, ລວມທັງໂອກາດໃນການພົວພັນໃນກຸ່ມຜູ້ທີ່ມີສ່ວນຮ່ວມໃນການສະໜັບສະໜູນຄູ ແລະ ການເຂົ້າເຖິງການຮຽນດ້ວຍຕົນເອງ.

- ການສະໜັບສະໜູນຈະມີປະສິດທິຜົນໄດ້ ກໍຕໍ່ເມື່ອມີສ່ວນຮ່ວມຂອງເພື່ອນຮ່ວມງານທີ່ມີຄວາມຊຳນານ ແລະ ມີປະສົບການ, ແລະ ສ້າງຄວາມຮູ້ ແລະ ທັກສະໃນການນຳໃຊ້ເຄື່ອງມື ICT.

**"ມັນມີວົງຈອນການຮຽນຮູ້ ທີ່ຄູທຸກຄົນສາມາດມາແລກປ່ຽນບົດຮຽນນຳກັນ. ພວກເຮົາມີການສັງເກດການສອນໃນຫ້ອງຮຽນຂອງກັນ ແລະ ກັນ ລະຫວ່າງບັນດາຄູສອນ ແລະ ໄດ້ມີການຕັ້ງກຸ່ມຂຶ້ນ. ມັນມີກິດຈະກຳການຊ່ວຍເຫຼືອກັນລະຫວ່າງຄູ." - ຜູ້ໃຫ້ການສະໜັບສະໜູນດ້ານນິເທດ, ແຂວງພາກເໜືອ**

ການຊ່ວຍເຫຼືອສະໜັບສະໜູນດ້ານວິຊາການ ຈາກຜູ້ອຳນວຍການ, ເພື່ອນຮ່ວມງານຂອງຄູ ແລະ ນິເທດແມ່ນມີຄຸນຄ່າຫຼາຍ ສຳລັບຄູສອນ, ແລະ ໃນບາງກໍລະນີ, ການເຂົ້າເຖິງການຊ່ວຍເຫຼືອນີ້ແມ່ນມີການເພີ່ມຂຶ້ນ.

- ໄດ້ມີການສະໜັບສະໜູນທີ່ມີຂອບເຂດກວ້າງຂຶ້ນ ແລະ ເລື້ອຍຂຶ້ນ ຈາກຜູ້ເຮັດວຽກດ້ານນິເທດ, ແລະ ໄດ້ຮັບການອຳນວຍຄວາມສະດວກຈາກທຶນຊ່ວຍເຫຼືອດ້ານການສຶກສາຂອງແຜນງານບີຄວາ.

**"ຖ້າຂ້ອຍບໍ່ເຂົ້າໃຈ, ຂ້ອຍກໍສາມາດໂທຫານິເທດໄດ້. ການໃຫ້ຄຳປຶກສາຜ່ານທາງໂທລະສັບເປັນປະໂຫຍດຢ່າງໃຫຍ່ຫຼວງສຳລັບຂ້ອຍ."**
**- ຄູສອນ, ແຂວງພາກເໜືອ**

## ຜົນໄດ້ຮັບນີ້ໝາຍຄວາມວ່າແນວໃດ?

ຫຼັກສູດປະຖົມສະບັບປັບປຸງໃໝ່ໃນ ສປປ ລາວ ສະແດງໃຫ້ເຫັນເຖິງການປ່ຽນແປງອັນສຳຄັນຕໍ່ກັບການສອນ ແລະ ການປະເມີນການຈັດຕັ້ງປະຕິບັດ. ໃນຂະນະທີ່ເຮົາສາມາດເຫັນໄດ້ ເຖິງການປ່ຽນແປງໃນແງ່ດີຕໍ່ກັບຄຸນນະພາບການສິດສອນ, ຄວາມຊັບຊ້ອນຂອງການປະຕິຮູບການສຶກສາໝາຍຄວາມວ່າ ມັນອາດຈະໃຊ້ເວລາຫຼາຍກວ່າ ແລະ ຕ້ອງການການສະໜັບສະໜູນສຳລັບຄູສອນທຸກຄົນ ເພື່ອໃຫ້ສາມາດເຂົ້າໃຈ ແລະ ມີການປະສົມປະສານເອົາວິທີການໃໝ່ໆເຫຼົ່ານີ້ ເຂົ້າໃນການປະຕິບັດການສອນຂອງພວກເຂົາ. ການປັບປຸງການມີສ່ວນຮ່ວມ ແລະ ການຮຽນຮູ້ຂອງນັກຮຽນ ຮຽກຮ້ອງໃຫ້ມີວິທີການທີ່ມີການຮ່ວມມື ແລະ ມີຈຸດສຸມ ຈາກຄູສອນໃນລະບົບການສຶກສາ, ໂຮງຮຽນ, ຜູ້ປົກຄອງ ແລະ ຊຸມຊົນ.

ແນວທາງໃນການພັດທະນາວິຊາຊີບຄູຢ່າງຕໍ່ເນື່ອງຂອງ ສສກ ແມ່ນສຸມສື່ການຮຽນການສອນເຂົ້າໃນການຝຶກອົບຮົມຄູ ແລະ ການສອນໃນຫ້ອງຮຽນຮ່ວມ. ແຜນງານບີຄວາ ໄດ້ເປັນພາກສ່ວນໜຶ່ງໃນວຽກງານນີ້, ໂດຍຮ່ວມກັນກັບຫຼາກຫຼາຍແຜນງານ ແລະ ບັນດາຄູ່ຮ່ວມພັດທະນາ ທີ່ນຳພາໂດຍ ສສກ ແລະ ສະໜັບສະໜູນໂດຍລັດຖະບານອົດສະຕຣາລີ.

ເຂົ້າເບິ່ງເວັບໄຊທ໌ຂອງ DFAT ເພື່ອອ່ານບົດລາຍງານສະບັບເຕັມ, ການປະເມີນການລົງທຶນຂອງອົດສະຕຣາລີໃນການພັດທະນາຄູໃນ ສປປ ລາວ. ບົດລາຍງານສະບັບນີ້ ໄດ້ສະແດງໃຫ້ເຫັນເຖິງພາກສ່ວນໜຶ່ງຂອງຊຸດການສຶກສາ ເຊິ່ງສະໜັບສະໜູນໂດຍກະຊວງການຕ່າງປະເທດ ແລະ ການຄ້າອົດສະຕຣາລີ (DFAT), ເພື່ອສຶກສາແຜນງານກ່ຽວກັບວຽກງານການພັດທະນາການຮຽນການສອນຢູ່ໃນ 3 ປະເທດຄື: ສປປ ລາວ, ຕີມໍເລັສເຕ ແລະ ວານູອາຕູ.

Australian Government
Department of Foreign Affairs and Trade

ACER

Education Analytics Service is supported by the Australian Government and implemented by the Australian Council for Educational Research.